ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3041 /ກງ

ນະຄອນຫຼວງວຽງຈັນ, ວັນທີ 13 ພະຈິກ 2020

**ຂໍ້ຕົກລົງ**

**ວ່າດ້ວຍ ການຮັບຮອງເອົາການໃຫ້ບໍລິການ**

**ຂອງທະນາຄານ ນະໂຍບາຍ ໃນການຮັບຝາກເງິນ ແລະ ການບໍລິການມອບພັນທະຕ່າງໆ**

**ເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຢູ່ບັນດາເມືອງທີ່ບໍ່ມີໜ່ວຍບໍລິການຂອງ ທະນາຄານທຸລະກິດ**

- ອີງຕາມ ດຳລັດຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ແຈ້ງການຂອງທ່ານລັດຖະມົນຕີກະຊວງການເງິນ ກ່ຽວກັບ ການຄຸ້ມຄອງເງິນສົດ ຢູ່ຄັງເງິນແຫ່ງຊາດປະຈຳ ແຂວງ, ນະຄອນຫຼວງ, ຄັງເງິນແຫ່ງຊາດປະຈຳເມືອງ, ນະຄອນ ໃນຂອບເຂດທົ່ວປະເທດ ສະບັບເລກທີ 3204/ກງ, ລົງວັນທີ 05 ສິງຫາ 2019;
- ອີງຕາມ ບົດລາຍງານຂອງຄັງເງິນແຫ່ງຊາດ ສະບັບເລກທີ 5610 /ຄງຊ, ລົງວັນທີ 10 ພະຈິກ 2020.

**ລັດຖະມົນຕີກະຊວງການເງິນ ຕົກລົງ :**

**<u>ມາດຕາ 01</u>:** ເຫັນດີຮັບຮອງເອົາ ການໃຫ້ບໍລິການຂອງທະນາຄານ ນະໂຍບາຍ ໃນການຮັບຝາກເງິນ ແລະ ການບໍລິການໃຫ້ແກ່ຜູ້ປະກອບການ ມອບພັນທະຕ່າງໆເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຢູ່ບັນດາເມືອງທີ່ບໍ່ມີໜ່ວຍບໍລິການຂອງ ທະນາຄານທຸລະກິດ;

**<u>ມາດຕາ 02</u>:** ມອບໃຫ້ ຄັງເງິນແຫ່ງຊາດ ເປັນໃຈກາງ ແລະ ປະສານສົມທົບກັບ ທະນາຄານ ນະໂຍບາຍ ເພື່ອສ້າງບົດບັນທຶກຄວາມເຂົ້າໃຈ (MOU) ຮ່ວມກັນ ກ່ຽວກັບການກຳນົດ ລະບຽບການ, ກົນໄກ, ຂັ້ນຕອນ, ວິທີການ ແລະ ຄ່າທຳນຽມ ໃນການໃຫ້ບໍລິການຕ່າງໆໃຫ້ລະອຽດ ເພື່ອຮັບປະກັນທາງດ້ານນິຕິກຳ ແລະ ໃຫ້ສາມາດຈັດຕັ້ງປະຕິບັດວຽກງານດັ່ງກ່າວໄດ້ຢ່າງມີປະສິດທິຜົນ;

**<u>ມາດຕາ 03</u>:** ມອບໃຫ້ຄັງເງິນແຫ່ງຊາດ ປະສານສົມທົບກັບຄັງເງິນແຫ່ງຊາດ ປະຈຳແຂວງ ແລະ ເມືອງ ທີ່ຈະນຳໃຊ້ການບໍລິການ ແລະ ເຜີຍແຜ່ການຈັດຕັ້ງປະຕິບັດວຽກງານວຽກງານດັ່ງກ່າວ ຕາມລະບົບສາຍຕັ້ງຂອງຕົນ;

**<u>ມາດຕາ 04</u>:** ມອບໃຫ້ ຄັງເງິນແຫ່ງຊາດ, ພະແນກການເງິນແຂວງ, ຄັງເງິນແຫ່ງຊາດ ປະຈຳແຂວງ-ເມືອງ, ທະນາຄານນະໂຍບາຍ, ຫ້ອງການ-ການເງິນເມືອງ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບໝາກຜົນດີ;

**<u>ມາດຕາ 05</u>:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ສົມດີ ດວງດີ